ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ ເລກທີ 3058 /ກງ

ນະຄອນຫຼວງວຽງຈັນ, ວັນທີ 27 ກັນຍາ 2018

# ຂໍ້ຕົກລົງ
## ວ່າດ້ວຍ ລະບຽບການບໍລິຫານຄຸ້ມຄອງ ແລະ ການດຳເນີນທຸລະກິດປະກັນໄພ

- ອີງຕາມກົດໝາຍ ວ່າດ້ວຍ ການປະກັນໄພ ສະບັບປັບປຸງ ສະບັບເລກທີ 06/ສພຊ, ລົງວັນທີ 21 ທັນວາ 2011,
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017,
- ອີງຕາມການສະເໜີຂອງກົມຄຸ້ມຄອງ, ພັດທະນາລັດວິສາຫະກິດ ແລະ ການປະກັນໄພ ສະບັບເລກທີ 1068 / ຄລປ, ລົງວັນທີ 25 ກັນຍາ 2018

## ລັດຖະມົນຕີກະຊວງການເງິນ ຕົກລົງ :

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດໂຄງປະກອບການບໍລິຫານຄຸ້ມຄອງບໍລິສັດປະກັນໄພ, ຂັ້ນຕອນການອະນຸມັດຜະລິດຕະພັນປະກັນໄພ, ຕົວແທນແລະນາຍໜ້າປະກັນໄພ ແລະ ນັກຄະນິດສາດປະກັນໄພ, ການຮຽກຮ້ອງການທົດແທນຄ່າເສຍຫາຍ, ການປັບໃໝ ແລະ ການລົງໂທດຕໍ່ຜູ້ລະເມີດ ແລະ ການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ.

**ມາດຕາ 2 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ ສຳລັບ ບັນດາບໍລິສັດ ປະກັນໄພທົ່ວໄປ, ປະກັນຊີວິດ, ປະກັນໄພລວມ, ນັກຄະນິດສາດປະກັນໄພ, ຕົວແທນ ແລະ ນາຍໜ້າປະກັນໄພທັງໝົດ ທີ່ດຳເນີນທຸລະກິດ ແລະ ເຄື່ອນໄຫວ ໃນ ສປປ ລາວ.